United Nations Conference on Trade and Development

**National Workshop on**

# Fostering Integration of the Lao People's Democratic Republic Downstream Value Chain of Maize into Regional Value Chains

**13 October 2020, Vientiane, Lao People’s Democratic Republic**

## Small and Medium Enterprise Promotion Fund

By

Mr. Phetanong Insarn-Deputy Director of SMEs Promotion Fund - SMEs Department,
MOIC, Lao People’s Democratic Republic

The views expressed are those of the author and do not necessarily reflect the views of UNCTAD.

ທສວ

# ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ
# Small and Medium Enterprise Promotion Fund

ວັນທີ 13 ຕຸລາ 2020

**ທ່ານ ເຜັດອານິງ ອິນສານ**

ຮອງຜູ້ອຳນວຍການກອງທຶນສົ່ງເສີມ SME

# ເນື້ອໃນ

I. ຄວາມເປັນມາຂອງກອງທຶນສົ່ງເສີມ SME (ທສວ) ;

II. ການສະໜອງສິນເຊື່ອໃຫ້ SME;

III. ການສະໜອງສິນເຊື່ອບ້ວງທຶນລັດຖະບານປະກອບໃຫ້ ທສວ;

IV. ການສະໜອງທຶນໃຫ້ໂຄງການວິຊາການ

# I. ຄວາມເປັນມາ ຂອງກອງທຶນສົ່ງເສີມ SME (ທສວ)

- ທສວ ເຄື່ອນໄຫວຕາມດຳລັດວ່າດ້ວຍ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 299/ລບ, ລົງວັນທີ 4 ກັນຍາ 2019 (ຍົກລະດັບ ແລະ ປັບປຸງຈາກ ດຳລັດ 123/ນຍ) ມີ 9 ໝວດ 45 ມາດຕາ (ດຳລັດ 123/ນຍ ປະກອບ ມີ 5 ໝວດ 25 ມາດຕາ);

- ທສວ ແມ່ນການຈັດຕັ້ງການເງິນໜຶ່ງຂອງລັດ ທີ່ຂຶ້ນກັບ ກະຊວງອຸດສາຫະກຳ ແລະ ການຄ້າ;

- ມີສະພາບໍລິຫານ ແລະ ຄະນະກຳມະການກວດສອບພາຍໃນ ທີ່ບໍ່ປະຈຳການ; ມີກອງເລຂາ (03 ຂະແໜງ: ບໍລິຫານ-ການເງິນ, ສິນເຊື່ອ ແລະ ໂຄງການວິຊາການ) ຮັບຜິດຊອບວຽກງານປະຈຳວັນຂອງ ທສວ;

# ໂຄງຮ່າງການຈັດຕັ້ງ ທສວ



# ພາລະບົດບາດຂອງ ທສວ

- ລະດົມທຶນຈາກແຫຼ່ງຕ່າງໆ ຢ່າງລວມສູນ ເພື່ອຮັບປະກັນໃຫ້ມີທຶນຮອນທີ່ໝັ້ນຄົງ ແລະ ຕໍ່ເນື່ອງ ເຂົ້າໃນການສົ່ງເສີມ SME ໃຫ້ເຕີບໃຫຍ່, ເຂັ້ມແຂງ ແລະ ຍືນຍົງ;

- ເປັນເຄື່ອງມືດັດສົມການສະໜອງສິນເຊື່ອໃຫ້ SME ທີ່ມີດອກເບ້ຍ ແລະ ໄລຍະການກູ້ຢືມທີ່ເໝາະສົມ ແຕ່ບໍ່ແມ່ນປ່ຽນສິນເຊື່ອ ທະນາຄານ ຫຼື ສະຖາບັນການເງິນອື່ນ ດໍາເນີນຢູ່;

- ເປົ້າໝາຍການນໍາໃຊ້ທຶນມີ 2 ເປົ້າໝາຍຂອງການນໍາໃຊ້ທຶນ ຄື:
  - *ສະໜອງສິນເຊື່ອໃຫ້ SME ໃນຮູບແບບຕ່າງໆ;*
  - *ສະໜອງທຶນໃຫ້ກິດຈະການສົ່ງເສີມ SME.*

# ແຫຼ່ງທຶນຂອງ ທສວ

- ທຶນທີ່ ລັດຖະບານ ປະກອບໃຫ້ 200 ຕື້ກີບ
  - ນຳໃຊ້ສະໜອງສິນເຊື່ອໃຫ້ SME ຈຳນວນ 91% ຂຶ້ນເມືອ;
  - ນຳໃຊ້ສຳລັບໂຄງການວິຊາການ ຈຳນວນ ບໍ່ເກີນ 8%;
  - ນຳໃຊ້ສຳບັບການບໍລິຫານກອງທຶນ ຈຳນວນ ບໍ່ເກີນ 1%.

- ທຶນຈາກແຫຼ່ງອື່ນໆ

ປະຕິບັດຕາມເງື່ອນໄຂຂອງຜູ້ໃຫ້ທຶນ ແລະ/ຫຼື ຕາມການພິຈາລະນາຂອງ ສະພາບໍລິຫານ ທສວ.

# II. ທຶນສະໜອງສິນເຊື່ອໃຫ້ SME ຂອງ ທສວ

| ລ/ດ | ບ້ວງເງິນ | ມູນຄ່າ |
|---|---|---|
| 1. | ລັດຖະບານ ປະກອບທຶນເບື້ອງຕົ້ນ | 32 ຕື້ກີບ |
| 2. | ໂຄງການເຂົ້າເຖິງແຫຼ່ງທຶນຂອງ SME | 111,68 ຕື້ກີບ |
| 3. | ບ້ວງເງິນສະສົມຂອງ ທສວ ທີ່ໄດ້ຈາກດອກເບ້ຍ | 3,8 ຕື້ກີບ |
| 4. | ລັດຖະບານ ປະກອບທຶນເພີ່ມ | 182 ຕື້ກີບ |
| | ລວມ | 329,48 ຕື້ກີບ |

# ບ້ວງ 32 ຕື້ກີບ ຜ່ານທະນາຄານພັດທະນາລາວ

ເລີ່ມປີ 2012 ຫາເດືອນ ສິງຫາ 2020 ປ່ອຍກູ້ໄດ້ 260 ສັນຍາ, 155 ຫົວໜ່ວຍ (ຜູ້ປະກອບກິດຈະການເພດຍິງ 131 ສັນຍາ, 84 ຫົວໜ່ວຍ), ມູນຄ່າ 79,01 ຕື້ກີບ.



# ບ້ວງ 32 ຕື້ກີບ ຜ່ານທະນາຄານພັດທະນາລາວ (ຕໍ່)

| ລ/ດ | ແຂວງ | ຈ/ນສັນຍາ | ຈ/ນຫົວໜ່ວຍ | ຂະແໜງການ | | | | | ວົງເງິນ ອະນຸມັດ (ຕື້ |
|---|---|---|---|---|---|---|---|---|---|
| | | | | ກະສິກຳ | ການຄ້າ | ບໍລິການ | ຫັດຖະກຳ | ອຸດສະຫະກຳ | |
| 1 | ຄຳມ່ວນ | 4 | 3 | 4 | 0 | 0 | 0 | 0 | 2.15 |
| 2 | ຈຳປາສັກ | 3 | 2 | 3 | | | | | 2.00 |
| 3 | ສະຫວັນນະເຂດ | 2 | 1 | 0 | 2 | 0 | 0 | 0 | 1.50 |
| 4 | ນະຄອນຫຼວງ | 228 | 135 | 61 | 72 | 66 | 5 | 24 | 66.17 |
| 5 | ວຽງຈັນ | 8 | 4 | 6 | 0 | 0 | 0 | 2 | 2.30 |
| 6 | ບໍລິຄຳໄຊ | 1 | 1 | 0 | 0 | 0 | 0 | 1 | 0.65 |
| 7 | ໄຊຍະບູລີ | 7 | 4 | 1 | 0 | 1 | 1 | 4 | 1.58 |
| 8 | ຫຼວງພະບາງ | 6 | 4 | 0 | 1 | 0 | 4 | 1 | 1.86 |
| 9 | ຜົ້ງສາລີ | 1 | 1 | 1 | 0 | | | | 0.80 |
| | ລວມ | 260 | 155 | 76 | 75 | 67 | 10 | 32 | 79.01 |

# ໂຄງການເຂົ້າເຖິງແຫຼ່ງທຶນ SME ມູນຄ່າ 111, 68 ຕື້ກີບ

ເດືອນກັນຍາ 2016 ຫາ ສິງຫາ 2020 ສາມາດປ່ອຍກູ້ໄດ້ 191 ສັນຍາ, 184 ຫົວໜ່ວຍ (ຜູ້ປະກອບກິດຈະການເພດຍິງ 115 ສັນຍາ, 108 ຫົວໜ່ວຍ), ມູນຄ່າ 126,26 ຕື້ກີບ.



# ໂຄງການເຂົ້າເຖິງແຫຼ່ງທຶນ SME ມູນຄ່າ 111, 68 ຕື້ກີບ (ຕໍ່)

## ສັງລວມການປ່ອຍກູ້ທັງໝົດ ຕັ້ງແຕ່ ເດືອນ ກັນຍາ 2016 - ສິງຫາ 2020

| ລ/ດ | ແຂວງ | ຈ/ນສັນຍາ | ຈ/ນຫົວໜ່ວຍ | ຂະແໜງການ | | | | | ວົງເງິນອະນຸມັດ |
|---|---|---|---|---|---|---|---|---|---|
| | | | | ການຄ້າ | ບໍລິການ | ຫັດຖະກໍາ | ກະສິກໍາ | ອຸດສະຫະກໍາ | |
| 1 | ຫຼວງນໍ້າທາ | 1 | 1 | 0 | 1 | 0 | 0 | 0 | 910,000,000 |
| 2 | ຊຽງຂວາງ | 3 | 3 | 0 | 0 | 3 | 0 | 0 | 3,000,000,000 |
| 3 | ຫຼວງພະບາງ | 5 | 5 | 0 | 3 | 2 | 0 | 0 | 2,300,000,000 |
| 4 | ນະຄອນຫຼວງ | 144 | 139 | 1 | 76 | 48 | 5 | 14 | 98,821,903,930 |
| 5 | ວຽງຈັນ | 5 | 3 | 2 | 3 | 0 | 0 | 0 | 2,700,000,000 |
| 6 | ຄໍາມ່ວນ | 4 | 4 | 2 | 0 | 2 | 0 | 0 | 1,600,000,000 |
| 7 | ສະຫວັນນະເຂດ | 18 | 18 | 0 | 12 | 5 | 0 | 1 | 12,170,000,000 |
| 8 | ຈໍາປາສັກ | 11 | 11 | 0 | 9 | 1 | 0 | 1 | 4,760,000,000 |
| **ລວມ** | | **191** | **184** | **5** | **104** | **61** | **5** | **16** | **126,261,903,930** |

# III. ສິນເຊື່ອບ້ວງ 200 ຕື້ກີບ ທຶນທີ່ລັດຖະບານປະກອບໃຫ້

- ຜ່ານ 4 ທະນາຄານທຸລະກິດ ໂດຍມີສັນຍາສະໜອງທຶນເປັນບ່ອນອີງ (ທະນາຄານພັດທະນາລາວ, ທະນາຄານຊາຄອມແບັງ ລາວ, ທະນາຄານຮ່ວມທຸລະກິດລາວຫວຽດ, ແລະ ທະນາຄານມາຣູຮານເຈເປນລາວ)
- ອັດຕາດອກເບ້ຍບໍ່ເກີນ 3% ຕໍ່ ປີ;
- ຂະແໜງການ ແລະ ຂົງເຂດບູລິມະສິດ ຂອງ ລັດຖະບານ
  - ອຸດສາຫະກຳ ປຸງແຕ່ງຜະລິດຕະພັນກະສິກຳ; ຫັດຖະກຳ; ກະສິກຳ ປູກຝັງ ແລະ ລ້ຽງສັດ; ທ່ອງທ່ຽວ.
  - ເຂດຫ່າງໄກສອກຫລີກ ແລະ ເຂດທຸກຍາກ ຕາມການກຳນົດຂອງ ລບ ແຕ່ລະໄລຍະ.

# ອັດຕາສ່ວນການແບ່ງທຶນ ໃຫ້ 4 ທະນາຄານທຸລະກິດ

| ລ/ດ | ຊື່ທະນາຄານ | ງວດທີ 1 | ງວດທີ 2 | ລວມ |
|---|---|---|---|---|
| 01 | ພັດທະນາລາວ | 27 ຕື້ກີບ | 23 ຕື້ກີບ | 50 ຕື້ກີບ |
| 02 | ໄຊງ່ອນເທືອງຕິ່ນ ລາວ | 30 ຕື້ກີບ | 20,5 ຕື້ກີບ | 50,5 ຕື້ກີບ |
| 03 | ຮ່ວມທຸລະກິດ ລາວ ຫວຽດ | 30 ຕື້ກີບ | 20,5 ຕື້ກີບ | 50,5 ຕື້ກີບ |
| 04 | ມາຣູຮານ ເຈແປນລາວ | 13 ຕື້ກີບ | 13 ຕື້ກີບ | 26 ຕື້ກີບ |
| | ລວມ | 100 ຕື້ກີບ | 77 ຕື້ກີບ | 177 ຕື້ກີບ |

# ການປ່ອຍກູ້ ເດືອນພຶດສະພາ 2020 ເຖິງ ສິງຫາ 2020

| ລ/ດ | ຊື່ທະນາຄານ | ຈ/ນສັນຍາ | ຈ/ນຫົວໜ່ວຍ | ວົງເງິນອະນຸມັດ |
|---|---|---|---|---|
| 1 | ໄຊງ່ອນເທື່ອງຕິນ ລາວ | 8 | 6 | 16,800,000,000 |
| 2 | ລາວຫວຽດ | 17 | 14 | 12,650,000,000 |
| 3 | ມາຣູຮານ | 5 | 4 | 4,600,000,000 |
| 4 | ພັດທະນາລາວ | 12 | 11 | 26,040,000,000 |
| ລວມ | | 42 | 35 | 60,090,000,000 |

# ສັງລວມການປ່ອຍກູ້ທຸກແຂວງ ເດືອນ ມິຖຸນາ-ສິງຫາ 2020

| ລ/ດ | ແຂວງ | ຈ/ນ ສັນຍາ | ຈ/ນ ຫົວໜ່ວຍ | ວົງເງິນອະນຸມັດ |
|---|---|---|---|---|
| 1 | ຄໍາມ່ວນ | 2 | 2 | 1,500,000,000 |
| 2 | ຈໍາປາສັກ | 4 | 4 | 5,600,000,000 |
| 3 | ສະຫວັນນະເຂດ | 2 | 1 | 4,000,000,000 |
| 4 | ສາລະວັນ | 4 | 4 | 2,100,000,000 |
| 5 | ຊຽງຂວາງ | 4 | 2 | 1,500,000,000 |
| 6 | ນະຄອນຫຼວງວຽງຈັນ | 16 | 13 | 32,900,000,000 |
| 7 | ວຽງຈັນ | 5 | 5 | 8,990,000,000 |
| 8 | ຫຼວງພະບາງ | 4 | 3 | 2,300,000,000 |
| 9 | ອຸດົມໄຊ | 1 | 1 | 1,200,000,000 |
| ລວມ | | 42 | 35 | 60,090,000,000 |

# IV. ການສະໜອງທຶນໃຫ້ໂຄງການວິຊາການ (TA)

ນັບແຕ່ປີ 2012 ຫາ ເດືອນສິງຫາ 2020, ທສວ ໄດ້ໃຫ້ທຶນສະໜັບສະໜູນໂຄງການວິຊາການແກ່ພາກສ່ວນຕ່າງໆໄປແລ້ວ 53 ໂຄງການ, ລວມມູນຄ່າ 3.035.936.088 ກີບ.

| ລ/ດ | ສົກປີ | ຈຳນວນໂຄງການ | ລວມມູນຄ່າ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | 2011-12 | 2 | 12.320.000 | |
| 2 | 2012-13 | 3 | 113.185.000 | |
| 3 | 2013-14 | 5 | 272.890.000 | |
| 4 | 2014-15 | 13 | 794.778.500 | |
| 5 | 2015-16 | 10 | 717.641.500 | |
| 6 | 2017 | 4 | 282.459.040 | |
| 7 | 2018 | 4 | 271.389.048 | |
| 8 | 2019 | 10 | 522.741.000 | |
| 9 | 2020 | 2 | 48.532.000 | ຮອດເດືອນສິງຫາ 2020 |
| ລວມ | | 53 | 3.035.936.088 | |

# ຮູບແບບການສະໜອງທຶນໃຫ້ໂຄງການວິຊາການຂອງ ທສວ

ມີ 02 ຮູບແບບ ດັ່ງລຸ່ມນີ້:

- **ການໃຫ້ທຶນສະໜັບສະໜູນ:** ເຂົ້າໃນການຝຶກອົບຮົມ, ສໍາມະນາທາງດ້ານວິຊາການ, ການວາງສະແດງ, ການຈັດຈ້າງຜູ້ຊ່ຽວຊານດ້ານຕ່າງໆ, ການປັບປຸງ ຫຼື ຍົກລະດັບເຕັກໂນໂລຊີ, ການພັດທະນາຜະລິດຕະພັນ ແລະ ການຫຸ້ມຫໍ່, ການປັບປຸງມາດຖານຄຸນນະພາບ, ການທັດສະນະສຶກສາແລກປ່ຽນບົດຮຽນຂອງຜູ້ປະກອບກິດຈະການ ແລະ ການປັບປຸງທຸລະກິດດ້ານຕ່າງໆ ທີ່ສອດຄ່ອງກັບກິດຈະການທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມ SME, ແຜນພັດທະນາ SME ຂອງລັດຖະບານ, ແຂວງ ແລະ ນະຄອນຫຼວງ;
- **ການໃຫ້ທຶນສົມທົບ:** ແມ່ນການໃຫ້ທຶນຈໍານວນໜຶ່ງ ເພື່ອນໍາໃຊ້ເຂົ້າໃນການຈັດຊື້ວັດຖຸອຸປະກອນ ແລະ ເຄື່ອງຈັກເພື່ອຮັບໃຊ້ການຜະລິດ.

# ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ

- **ກຸ່ມເປົ້າໝາຍ**

  SME ຕາມນິຍາມທີ່ລະບຸໄວ້ໃນດຳລັດວ່າດ້ວຍການຈັດແບ່ງຂະໜາດ SME ສະບັບເລກທີ 25/ລບ, ລົງວັນທີ 16 ມັງກອນ 2017 ທີ່ຂຶ້ນທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ, ສະມາຊິກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະມາຄົມ ແລະ ກຸ່ມທຸລະກິດໃນຂະແໜງການວິຊາຊີບໃດໜຶ່ງ.

- **ຜູ້ທີ່ສາມາດຍື່ນຂໍທຶນ**
  - ໜ່ວຍງານຂອງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ມີບົດບາດສົ່ງເສີມ SME;
  - ຫຼືວໜ່ວຍ SME, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ, ສະມາຄົມ, ກຸ່ມທຸລະກິດ, ທະນາຄານທຸລະກິດ ຢູ່ສູນກາງ ແລະ ທ້ອງຖິ່ນ.

# ມູນຄ່າ ແລະ ໄລຍະເວລາ ຫຼື ອາຍຸ ຂອງໂຄງການ

- **ການໃຫ້ທຶນສະໜັບສະໜູນໂຄງການວິຊາການ** ຕ້ອງມີມູນຄ່າບໍ່ເກີນ100 ລ້ານກີບຕໍ່ໂຄງການ;

- **ການໃຫ້ທຶນສົມທົບ** ຕ້ອງມີມູນຄ່າບໍ່ເກີນ 200 ລ້ານກີບຕໍ່ໂຄງການ.

- ໂຄງການທີ່ຖືກອະນຸມັດ ຕ້ອງຈັດຕັ້ງໃຫ້ສຳເລັດພາຍໃນ 1 ປີ ຖ້າບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມກຳນົດເວລາ ເຈົ້າຂອງໂຄງການຕ້ອງສົ່ງທຶນທີ່ເຫຼືອ ໃຫ້ ທສວ ໂດຍອັດຕະໂນມັດ;

# ຂັ້ນຕອນຍື່ນສະເໜີຂໍທຶນ

- ຕື່ມຂໍ້ມູນໃນແບບຟອມບົດສະເໜີໂຄງການໂດຍສັງເຂບເພື່ອສະເໜີແນວຄວາມຄິດເບື້ອງຕົ້ນ (ເອກະສານຄັດຕິດ 1);
- ຖ້າບົດສະເໜີໂຄງການໂດຍສັງເຂບຜ່ານການພິຈາລະນາເຈົ້າຂອງໂຄງການຂຽນສະເໜີໂຄງການຕາມແບບຟອມບົດສະເໜີໂຄງການ ແລະ ຂຶ້ນແຜນງົບປະມານໂຄງການ ທີ່ ທສວ ກໍານົດໄວ້ (ເອກະສານຄັດຕິດ 3);
- ສົ່ງໜັງສືສະເໜີ ຄັດຕິດບົດສະເໜີໂຄງການມາຫາ ທສວ (ເອກະສານຄັດຕິດ 2);
- ແບບຟອມຕ່າງໆ ສາມາດດາວໂຫຼດ ຫຼື ຕື່ມຕາມແບບຟອມ ແລະ ຍື່ນສະເໜີມາຍັງ ທສວ ຜ່ານລະບົບອອນລາຍ (Online)

# ❑ ຮູບພາບຂັ້ນຕອນການສະເໜີຂໍທຶນ (TA) ທສວ

ຂັ້ນຕອນການສະເໜີຂໍທຶນ ປະກອບດ້ວຍ 4 ຂັ້ນຕອນ ດັ່ງນີ້:



# ຂັ້ນຕອນການປະເມີນໂຄງການ

ຂັ້ນຕອນການປະເມີນໂຄງການ ປະກອບດ້ວຍ 10 ຂັ້ນຕອນ ດັ່ງນີ້:



ທສວ

# ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ

ຖະໜົນໜອງບອນ, ບ້ານຝາຍ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ

ໂທ: +856-21-414064 ຕໍ່ 305

www.dosmep.org

www.facebook.com/dosmep